TRADITIONAL ARTS
AND ETHNOLOGY CENTRE
L U A N G P R A B A N G

ຊື່ແລະນາມສະກຸນ: ..........................................................

ອາຍຸ: ..................................................................

# <u>ຍິນດີຕ້ອນຮັບເຂົ້າສູ່ສູນສີລະປະແລະຊົນເຜົ່າວິທະຍາ!</u>

**ມື້ນີ້**:ພວກນ້ອງຈະໄດ້ຮຽນກ່ຽວກັບຄວາມແຕກຕ່າງຂອງບັນດາຊົນເຜົ່າຕ່າງໆທີ່ອາໄສຢູ່ໃນປະເທດລາວ.
ບາງທີພວກນ້ອງອາດຈະຮູ້ຈັກ ລາວລຸ່ມ, ລາວເທິງ ແລະ ລາວສູງ.

ໃນຄວາມເປັນຈິງແລ້ວປະເທດລາວມີຫລາຍຊົນເຜົ່າທີ່ອາໄສຢູ່ຮ່ວມກັນ.ໃນປັດຈຸບັນນີ້ມີ49ຊົນເຜົ່າ.
ໃນມື້ນີ້ພວກນ້ອງຈະເຫັນຄວາມແຕກຕ່າງລະຫວ່າງ6ຊົນເຜົ່າທີ່ນອນຢູ່ໃນ49ຊົນເຜົ່າທີ່ອາໄສຢູ່ໃນປະເທດ ລາວ.

ເມື່ອພວກເຮົາເວົ້າເຖິງບັນດາກຸ່ມຊົນເຜົ່າແລ້ວແມ່ນໝາຍເຖິງກຸ່ມຄົນທົ່ວໄປທີ່ມີພາສາ,ສາສະໜາ,
ວັດທະນາທຳແລະພິທີກຳຕ່າງໆຕະຫລອດຮອດປະເພນີການນຸ່ງຖືທີ່ເປັນເອກະລັກເປັນຂອງຕົນເອງ.
ທຸກຄົນໃນປະເທດລາວບໍ່ມີໃຜຄືກັນ!

**ຄຳຖາມ**: **ພວກນ້ອງແມ່ນຄົນຊົນເຜົ່າໃດ?**

……………………………………………………………………………………………

## <u>ເຜົ່າອາຄາ</u>

ຊົນເຜົ່າອາຄາເປັນຊົນເຜົ່າທີ່ອາໄສຢູ່ພາກເໜືອຂອງປະເທດລາວເປັນຕົ້ນແມ່ນແຂວງຫລວງນ້ຳທາແລະ ແຂວງຜົ້ງສາລີ. ນີ້ແມ່ນການວາງສະແດງກ່ຽວກັບເຄື່ອງປະດັບຫົວຂອງແມ່ຍິງຊົນເຜົ່າອາຄາປູລີໃຫຍ່.ຜ້າປົກຫົວອັນນີ້ເຮັດ ດ້ວຍເງິນແທ້ຫລາຍກວ່າ300ສິ້ນຊວນຕິດຕໍ່ກັນ.ຄວາມຈິງແລ້ວ,ເຜົ່າອາຄາມີຫລາຍແຊງ,ແຕ່ລະແຊງມີຊື່ ເອີ້ນຕ່າງກັນ. ໃນນີ້ພວກເຮົາໄດ້ວາງສະແດງ 3 ແຊງດ້ວຍກັນ.

**ກິດຈະກຳໃນມື້ນີ້**: ໃຫ້ພວກນ້ອງຊອກຫາວັດຖຸໃນຮູບດັ່ງລຸ່ມນີ້ໃນຫ້ອງວາງສະແດງແລ້ວໃຫ້ຂຽນໃສ່ກ້ອງຮູບວ່າ ແມ່ນເຄື່ອງຂອງອາຄາແຊງໃດ?.





………………………… ……………………… ………………………

**ວຽກບ້ານ**: ໃຫ້ພວກນ້ອງແຕ້ມຫລວດລາຍປະດັບປະດາແລະລະບາຍສີໃສ່ກະດຸມເສື້ອຂອງຊົນເຜົ່າອາຄາດັ່ງລຸ່ມນີ້.




## ຊົນເຜົ່າມົ້ງ

ຫ້ອງໝົດນີ້ແມ່ນການວາງສະແດງກ່ຽວກັບບຸນປີໃຫມ່ຂອງຊົນເຜົ່າມົ້ງ.ບຸນປີໃຫມ່ຂອງຊົນເຜົ່າມົ້ງແມ່ນຈັດຂຶ້ນ ໃນເດືອນ12ຫລືເດືອນ1ຂອງທຸກໆປີ,ແຕ່ລະປີວັນທີ່ຈັດງານບຸນປີໃຫມ່ແມ່ນຈະແຕກຕ່າງກັນໄປອີງຕາມປະຕິທິນລາຍເດືອນຂອງ ເຜົ່າມົ້ງ.

ບຸນປີໃຫມ່ເປັນງານບຸນທີ່ໃຫຍ່ຂອງເຜົ່າມົ້ງ,ທຸກຄົນຈະແຕ່ງຕົວນຸ່ງເຄື່ອງທີ່ສວຍງາມແລະກໍ່ມີການຫລິ້ນເກມຕ່າງໆ.ໜຶ່ງໃນເກມເຫລົ່ານັ້ນມີເກມໜຶ່ງທີ່ເອີ້ນວ່າ"ເກມປໍເປາະ"ເກມນີ້ຜູ້ຍິງຈະຢືນຢູ່ແຖວໜຶ່ງແລະຜູ້ຊາຍກໍ່ ຈະຢືນຢູ່ແຖວໜຶ່ງທີ່ກົງກັນຂ້າມປິ່ນໜ້າຫາກັນ.ພວກເຂົາໂຍນໝາກຄອນຫລືໝາກກ້ຽງໃຫ້ກັນຖ້າຜູ້ໃດເຮັດ ໝາກຄອນຕົກ ຜູ້ນັ້ນຈະຕ້ອງໄດ້ຮ້ອງເພງ. ນີ້ເປັນວິທີລົມບ່າວ-ສາວໄວໜຸ່ມ

**ກິດຈະກໍາໃນມື້ນີ້**: ການສະເຫລີມສະຫລອງບຸນປີໃຫມ່ເຜົ່າມົ້ງໃຊ້ເວລາຈັກມື້?

………………………  (ຄໍາຕອບຢູ່ປ້າຍຂໍ້ມູນໃນຫ້ອງວາງສະແດງເຜົ່າມົ້ງ)

**ວຽກບ້ານ**: ໃຫ້ຖາມຄອບຄົວວ່າບຸນປີໃຫມ່ຂອງເຈົ້າເຮັດຫຍັງແດ່?

1. ຄອບຄົວຂອງເຈົ້າສະຫລອງປີໃຫມ່ເດືອນໃດ?.

………………………………………………………………………………………..

2. ຄອບຄົວຂອງເຈົ້າສະຫລອງປີໃຫມ່ຄືແນວໃດ?

………………………………………………………………………………………..

3. ເຈົ້ານຸ່ງເຄື່ອງພິເສດຄືຄົນເຜົ່າມົ້ງບໍ?

………………………………………………………………………………………..

4. ເຈົ້າມີກິດຈະກໍາທີ່ເປັນປະເພນີຂອງຄອບອັນໃດໜຶ່ງສໍາລັບບຸນປີໃຫມ່ບໍ?

…………………………………………………………………………………….

# <u>ຊີນເຜົ່າໄຕດຳ</u>

ເຜົ່າໄຕດຳເຮັດເຄື່ອງທີ່ສວຍງາມເຫຼົ່ານີ້ໄວ້ສຳລັບນອນ.ຜູ້ຍິງຈະກະກຽມເຮັດມຸ້ງແລະເຄື່ອງນອນເຫຼົ່ານີ້ໄວ້ສຳລັບແຕ່ງງານ.
ພວກນ້ອງເຄີຍເຫັນມຸ້ງແບບນີ້ມາກ່ອນບໍ? ໃຫ້ເບິ່ງການປະດັບປະດາຕາມຂອບເບື້ອງເທິງຂອງມຸ້ງ.

**ກິດຈະກຳໃນມື້ນີ້**: ກະລຸນເບິ່ງຮູບແຕ້ມຂ້າງລຸ່ມນີ້ ວ່າຂາດຫຍັງແດ່? ……………..……


Copyright Editions XangNoi & TAEC©2008

**ວຽກບ້ານ**: ໃຫ້ພວກນ້ອງລະບາຍສີໃສ່ຮູບແຕ້ມບ່ອນນອນຂອງໄຕດຳ. ພວກນ້ອງສາມາດໃສ່ໄດ້ຫລາຍສີ!

## ຊົນເຜົ່າກຶມມຸ

ເຜົ່າກຶມມຸໂດຍສະເພາະຜູ້ຊາຍເຮັດການຈັກສານເກັ່ງ.ພວກເຂົາເປັນເປັນນັກຈັກສານທີ່ມີຄວາມຊຳນິຊຳ ນານ. ກະລຸນເບິ່ງເຮືອນຄົວຂອງເຜົ່າກຶມມຸໃນຫ້ອງວາງສະແດງໃຫ້ລະອຽດ.

**ກິດຈະກຳໃນມື້ນີ້**: ໃຫ້ຂຽນລາຍຊື່ບັນດາວັຖຸທີ່ເຮັດດ້ວຍໄມ້ໄຜ່ທຸກຢ່າງທີ່ວາງສະແດງໃນເຮືອນຄົວຂອງເຜົ່າກຶມມຸ.

……………………………. ……………………………….

……………………………. ……………………………….

……………………………. ……………………………….

……………………………. ……………………………….

ໃນແຂວງຫລວງພະບາງມີເຜົ່າກຶມມຸອາໄສຢູ່ຫລາຍ.ບາງທີ່ພວກນ້ອງອາດມີຫມູ່ເປັນຄົນເຜົ່າກຶມມຸ
ຫລືບາງທີ່ພວກນ້ອງອາດເປັນຄົນເຜົ່າກຶມມຸກໍ່ເປັນໄດ້!
ຄຳສັບສອງຄຳລຸ່ມນີ້ເປັນພາສາກຶມມຸ:

**ສມາຍເລີ** (ແປວ່າ "ສະບາຍດີ!")

**ມ່ຳ/ເບີ** (ແປວ່າ "ກິນ!")

**ວຽກບ້ານ**:ໃຫ້ພວກນ້ອງເອົາຄຳສັບທີ່ເປັນພາສາກຶມມຸສອງຄຳຂ້າງເທິງນັ້ນໄປສອນຄົນໃນຄອບຄົວຂອງເຈົ້າ!

## ການແຕ່ງດອງ

ໝົດທຸກຊົນເຜົ່າໃນລາວມີປະເພນີການແຕ່ງດອງແຕກຕ່າງກັນໄປຕາມແຕ່ລະເຜົ່າ.ການແຕ່ງດອງເປັນວິທີການທີ່ສຳຄັນອັນໜຶ່ງທີ່ສາມາດມອງເຫັນເຖິງການເຊື່ອຖືຂອງເຜົ່ານັ້ນໆ.ໃນສະໄຫມກ່ອນໄວໜຸ່ມແຕ່ງງານແຕ່ອາຍຸຍັງນ້ອຍປະມານ13ປີຕົ້ນໆ! ແຕ່ປະຈຸບັນນີ້,ການສຶກສາແລະອາຊີບເປັນສິ່ງທີ່ສຳຄັນ,ເພາະສະນັ້ນ ຄົນປະຈຸບັນນີ້ຈຶ່ງແຕ່ງງານອາຍຸອາວແກ່ກ່ວາ. ເຈົ້າຄິດວ່າຕົນເອງຢາກຈະແຕ່ງງານຕອນອາຍຸຈັກປີ?

**<u>ກິດຈະກຳໃນມື້ນີ້</u>**:ເຈົ້າສາວສອງຄົນລຸ່ມນີ້ມາຈາກເຜົ່າທີ່ແຕກຕ່າງກັນ.ພວກນ້ອງສາມາດບອກດ້ວຍລັກສະນະການແຕ່ງຊົງຜົມຂອງເຂົາເຈົ້າ!

ພວກນ້ອງສາມາດຈຳແນກພວກເຂົາໄດ້ບໍວ່າແມ່ນຊົນເຜົ່າໃດ? (ໃຫ້ເບິ່ງໃນຫ້ອງວາງສະແດງ!)





ເຈົ້າສາວຜູ້ນີ້ແມ່ນ:…………………. ເຈົ້າສາວຜູ້ນີ້ແມ່ນ:…………

**<u>ວຽກບ້ານ</u>**:ໃຫ້ຖາມພໍ່ແມ່ຫລືພໍ່ປູ່ແມ່ຍ່າ/ພໍ່ເຖົ້າແມ່ເຖົ້າຂອງພວກນ້ອງກ່ຽວກັບການລົມບ່າວ-ສາວແລະແຕ່ງດອງເຂົາເຈົ້າຕາມຄຳຖາມດັ່ງລຸ່ມນີ້.

1. ເຈົ້າແຕ່ງງານຕອນອາຍຸຈັກປີ?

……………………………………………………………………………......................

2. ພໍ່ແມ່ຂອງເຈົ້າເປັນຜູ້ຈ່າຍຄ່າສິນສອດບໍ? ມັນແມ່ນຫຍັງ?

……………………………………………………………………………........................

3. ພວກເຂົາເຮັດພິທີກຳຫຍັງແດ່? ພວກເຂົາຕ້ອງໄດ້ເຮັດພິທີກຳເຫຼົ່ານັ້ນບໍ?

……………………………………………………………………………........................

## ຂໍຄອບໃຈ!

ພວກເຮົາຫວັງວ່າພວກນ້ອງຈະມີຄວາມສະໜຸກສະໜານກັບການມາທ່ຽວຊົມສູນສິລະປະແລະຊົນເຜົ່າວິ ທະຍາໃນຄັ້ງນີ້.
ພວກນ້ອງຮູ້ບໍ່ວ່າຄົນລາວທຸກຄົນບໍ່ໄດ້ເສຍຄ່າເຂົ້າຊົມແລະສາມາດເຂົ້າຊົມໄດ້ທຸກເວລາ?
ພວກນ້ອງສາມາດມາທ່ຽວຊົມດ້ວຍຕົນເອງໄດ້ທຸກເວລາຕາມຄວາມຕ້ອງການໂດຍບໍ່ຈຳເປັນລໍຖ້າໃຫ້ໝູ່ ສ່ອນ.
ພວກນ້ອງສາມາດບອກຄອບຄົວແລະໝູ່ເພື່ອນຂອງພວກນ້ອງໃຫ້ມາທ່ຽວຊົມ!
ພວກເຮົາຂໍສ່ອນເຊີນຄົນລາວໝົດທຸກຄົນມາທ່ຽວຊົມສູນສິລະປະຊົນເຜົ່າແລະວິທະຍາເບິ່ງເຄື່ອງນຸ່ງຮົ່ມແລະເຄື່ອງຫັດຖະກຳຂອງບັນດາເຜົ່າໃນລາວ.

ພວກເຮົາຫວັງວ່າຈະໄດ້ພົບກັບພວກນ້ອງອີກໃນໂອກາດຕໍ່ໄປ.




ສູນສິລະປະແລະຊົນເຜົ່າວິທະຍາ
ບ້ານ ຂາມຍ່ອງ, ຫລວງພະບາງ
ໂທ:071253364
ຄົນລາວບໍ່ເສຍຄ່າເຂົ້າຊົມ.
20,000 ກີບ ສຳລັບແຂກຕ່າງປະເທດ.